ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 2826/ສທ

ນະຄອນຫລວງວຽງຈັນ,ວັນທີ 22 NOV 2017

# ຂໍ້ຕົກລົງ

## ຂອງລັດຖະມົນຕີກະຊວງສາທາລະນະສຸກ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 96/ນຍ ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງສາທາລະນະສຸກ
- ອີງຕາມ ໃບສະເໜີຂອງມະຫາວິທະຍໄລ ວິທະຍາສາດ ສຸຂະພາບ ສະບັບເລກທີ 5042/ມວສ, ລົງວັນທີ 12 ຕຸລາ 2017
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງ ກົມການສຶກສາ ສາທາລະນະສຸກ

ລັດຖະມົນຕີຕົກລົງ:

**ມາດຕາ 1.** ອະນຸມັດຮັບຮອງ ຂີດຄວາມສາມາດຂອງ ເພສັຊກອນ ໃນ ສປປລາວ (Core Competencies for Pharmacists in Lao PDR)ຢູ່ຄະນະເພສັຊສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ

**ມາດຕາ 2.** ມອບໃຫ້ ຄະນະເພສັຊສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ເປັນໃຈກາງປະສານເພື່ອຜັນຂະຫຍາຍ ໃນການຈັດຕັ້ງປະຕິບັດ ຂີດຄວາມສາມາດຂອງເພສັຊກອນ ໃຫ້ໄດ້ຜົນດີໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 3.** ໃຫ້ຫ້ອງການກະຊວງສາທາລະນະສຸກ, ກົມຈັດຕັ້ງພະນັກງານ, ກົມການສຶກສາ ສາທາລະນະສຸກ , ກົມປິ່ນປົວ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ບ່ອນນຳສົ່ງ:

| | |
|---|---|
| - ຫ້ອງການກະຊວງສາທາລະນະສຸກ | 1 ສະບັບ |
| - ກົມຈັດຕັ້ງພະນັກງານ | 1 ສະບັບ |
| - ກົມການສຶກສາ ສາທາລະນະສຸກ | 3 ສະບັບ |
| - ກົມປິ່ນປົວ | 1 ສະບັບ |
| - ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ | 1 ສະບັບ |
| - ຄະນະເພສັຊສາດ | 1 ສະບັບ |
| - ເກັບຮັກສາໄວ້ | 1 ສະບັບ |

ຮສ ດຣ. ບຸນກອງ ສີຫາວົງ

# ຂີດຄວາມສາມາດຫລັກຂອງເພສັຊກອນ ໃນ ສປປ ລາວ
# (Core competencies for Pharmacists in Lao PDR)

ຈຸດປະສົງຂອງການກຳນົດຂີດຄວາມສາມາດຫລັກຂອງເພສັຊກອນ ໃນ ສປປ ລາວ

- ເພື່ອຮັບປະກັນວ່າເພສັຊກອນມີຂີດຄວາມສາມາດທີ່ກ່ຽວຂ້ອງທັງໝົດເພື່ອເຮັດໜ້າທີ່ພາລະບົດບາດ ແລະ ການບໍລິການໃນຂົງເຂດວຽກງານເພສັຊກັມ

ເພື່ອໃຫ້ເພສັຊກອນລາວມີຄວາມສາມາດປະຕິບັດວຽກງານເພສັຊກັມຢູ່ ສປປ ລາວ ແລະ ຂົງເຂດໄດ້ຢ່າງມີຄຸນນະພາບ ແລະ ປະສິດທິພາບ ເພສັຊກອນຄວນມີຂີດຄວາມສາມາດທີ່ສະເພາະແນໃສ່ ເພື່ອສົ່ງເສີມສຸຂະພາບຂອງ ປະຊາຊົນ ບັນດາເຜົ່າໃຫ້ດີຂຶ້ນ ດ້ວຍວິທີປ້ອງກັນ ແລະ ປິ່ນປົວພະຍາດ ໂດຍຜ່ານລະບົບການສະໜອງຢາທີ່ຮັບປະກັນຄື:

- ມີຢາຈຳເປັນພື້ນຖານຢ່າງທົ່ວເຖິງໃນລາຄາທີ່ເໝາະສົມ, ໂດຍສະເພາະຢູ່ເຂດຫ່າງໄກສອກຫລີກ ບ່ອນທີ່ປະຊາຊົນທຸກຍາກ ແລະ ສຸມໃສ່ບັນດາພະຍາດທີ່ແຜ່ຫລາຍ
- ຢາທຸກຊະນິດຕ້ອງມີຄຸນນະພາບດີ, ມີຄວາມປອດໄພ ແລະ ມີປະສິດທິພາບ ຖືກນຳໃຊ້ເຂົ້າໃນການປິ່ນປົວຢ່າງຖືກຕ້ອງ ສົມເຫດ ສົມຜົນ ໂດຍພະນັກງານສາທາລະນະສຸກໃຫ້ແກ່ ຜູ້ບໍລິໂພກ
- ຊຸກຍູ້ ແລະ ສົ່ງເສີມການນຳໃຊ້ຢາພື້ນເມືອງ ຢ່າງກວ້າງຂວາງ

ປະຈຸບັນ ຫລັກສູດເພສັຊສາດໃນ ສປປ ລາວມີ 3 ສາຂາ ຄື ວິທະຍາສາດເພສັຊກັມ, ບໍລິບານເພສັຊກັມ ແລະ ການ ຢາພື້ນເມືອງລາວ, ແຕ່ຜູ້ທີ່ຮຽນຈົບທຸກສາຂາໃນລະດັບປະລິນຍາຕີ ແມ່ນຖືກເອີ້ນວ່າເປັນ ເພສັຊກອນຄືກັນ ແລະ ມີ ພາລະໜ້າທີ່ ໃນການຜັນຂະຫຍາຍນະໂຍບາຍແຫ່ງຊາດດ້ານຢາໃຫ້ປະກົດຜົນເປັນຈິງຮ່ວມກັນ. ດັ່ງນັ້ນ, ຢູ່ໃນຂີດຄວາມສາມາດຂອງເພສັຊກອນໃນ ສປປ ລາວ ສະບັບນີ້ຈະກຳໜົດສະເພາະຂີດຄວາມສາມາດຫລັກ (Core competency) ຊຶ່ງເປັນຂີດຄວາມສາມາດທີ່ເພສັຊກອນທຸກສາຂາຈະຕ້ອງມີຮ່ວມກັນ.

ອະທິບາຍຄຳສັບ:

- ຂີດຄວາມສາມາດ (Competency)

  ແມ່ນໝາຍເຖິງ ຄວາມສາມາດ, ທັດສະນະຄະຕິ ແລະ ຄຸນລັກສະນະອື່ນໆ (ລວມທັງຄຸນຄ່າ ແລະ ຄວາມເຊື່ອ) ທີ່ແຕ່ລະບຸກຄົນໄດ້ຮັບອີງໃສ່ພື້ນຖານຄວາມຮູ້ (ທີ່ໄດ້ຮັບຈາກການຮຽນໃນມະຫາວິທະຍາໄລ) ແລະ ປະສົບການ (ທີ່ໄດ້ຮັບຈາກການເຮັດວຽກງານຕົວຈິງ), ຊຶ່ງສິ່ງທັງໝົດນີ້ເມື່ອລວມເຂົ້າກັນ ແລ້ວກໍຈະສາມາດເຮັດໃຫ້ເພສັຊກອນສາມາດປະຕິບັດວຽກງານໄດ້ຢ່າງມີປະສິດທິຜົນ.

- ຂີດຄວາມສາມາດຫລັກ (Core competency)

  ໝາຍເຖິງຂີດຄວາມສາມາດທີ່ເພສັຊກອນຄວນມີຮ່ວມກັນໃນ ລະດັບໜຶ່ງ, ບໍ່ແມ່ນຂີດຄວາມສາມາດຕາມໜ້າທີ່ຂອງເພສັຊກອນ (Functional competency) ໃນແຕ່ລະສາຂາ. ຂີດຄວາມສາມາດຫລັກຈະຄອບຄຸມເຖິງ ຄວາມຮູ້ ຄວາມສາມາດ ທັກສະ ປະສົບການ ທັດສະນະຄະຕິ ຈັນຍາບັນ ແລະ ຄຸນລັກສະນະອື່ນໆ ທີ່ສຳຄັນ ເຊັ່ນ ຄວາມເຊື່ອ. ຂີດຄວາມສາມາດຫລັກຄວນຢູ່ໃນລະດັບທີ່ສາມາດປະຕິບັດໄດ້ ໝາຍວ່າເປັນລະດັບທົ່ວໄປ (General level of performance) ໃນການປະຕິບັດວິຊາຊີບ (Pharmacy practice).

- ຂີດຄວາມສາມາດຕາມໜ້າທີ່ (Functional competency)

  ໝາຍເຖິງຂີດຄວາມສາມາດສະເພາະຂອງເພສັຊກອນຕາມແຕ່ລະສາຂາວິຊາ

- ການບໍລິບານທາງເພສັຊກັມ (Care in Pharmacy)

  ໝາຍເຖິງການໃນການບໍລິການກ່ຽວກັບວຽກງານເພສັຊກັມເຊັ່ນ ການແນະນຳການນຳໃຊ້ຢາ, ການໃຫ້ຄຳປຶກສາດ້ານຢາແກ່ຄົນເຈັບ ແລະ ພະນັກງານສາທາລະນະສຸກ, ການຕິດຕາມການເກີດປະຕິກິລິຍາຕໍ່ກັນລະຫວ່າງຢາ-ຢາ ແລະ ຢາ-ອາຫານ, ການເກີດພິດເບື່ອຂອງຢາ, ການເກີດອາການຂ້າງຄຽງຂອງຢາ,...

ເພສັຊກອນລາວທຸກຄົນຄວນມີຂີດຄວາມສາມາດຫລັກດັ່ງລຸ່ມນີ້:

ໝວດທີ່ 1: ການປະຕິບັດໜ້າທີ່ດ້ານວິຊາຊີບຢ່າງມີຈັນຍາທຳ ແລະ ຖືກຕ້ອງຕາມກົດໝາຍ

ໝວດທີ່ 2: ການເຮັດວຽກເປັນໝູ່ຄະນະ ແລະ ເປັນລະບົບ

ໝວດທີ່ 3: ການສະໜອງຂໍ້ມູນຂ່າວສານ ແລະ ຄວາມຮູ້

ໝວດທີ່ 4: ການປະຕິບັດກ່ຽວກັບຜະລິດ ແລະ ຄວບຄຸມຄຸນນະພາບຜະລິດຕະພັນຢາຫລວງ, ຢາພື້ນເມືອງ, ອາຫານເສີມສຸຂະພາບ, ເຄມີເພສັຊ, ອາຫານ ແລະ ເຄື່ອງສຳອາງ

ໝວດທີ່ 5: ການຈັດຫາຢາ

ໝວດທີ່ 6: ການບໍລິບານທາງເພສັຊກັມເບື້ອງຕົ້ນ ແລະ ການໃຊ້ຢາພື້ນເມືອງ

ໝວດທີ່ 7: ລະບົບສາທາລະນະສຸກ ແລະ ລະບົບສຸຂະພາບ

ຕາຕະລາງ 1: ມາດຕະຖານຂີດຄວາມສາມາດຫລັກຂອງເພສັຊກອນ

| ມາດຕະຖານຂີດຄວາມສາມາດ (competency standard) | ອົງປະກອບ (element) | ຂໍ້ກຳນົດໃນການປະຕິບັດ (performance criteria) |
|---|---|---|
| ໝວດທີ 1: ການປະຕິບັດໜ້າທີ່ດ້ານວິຊາຊີບຢ່າງມີຈັນຍາທຳ ແລະ ຖືກຕ້ອງຕາມກົດໝາຍ | | |
| 1.1 ການເປັນຜູ້ມີສິນລະທຳ | 1.1.1 ປະພຶດຕົນໂດຍຄຳນຶງ ເຖິງ ສິນລະທຳ | 1.1.1.1 ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບສິນລະທຳ |
| | | 1.1.1.2 ສາມາດປະເມີນການກະທຳ ພຶດຕິກຳທີ່ບໍ່ເໝາະສົມ ຫລືວ່າບໍ່ສອດຄ່ອງກັບສິນລະທຳ |
| 1.2 ການປະຕິບັດວິຊາຊີບຖືກຕ້ອງຕາມລະບຽບກົດໝາຍ | 1.2.1 ຄວາມຮູ້ດ້ານກົດໝາຍທີ່ ກ່ຽວຂ້ອງກັບວິຊາຊີບ ແລະ ການປະຕິບັດວຽກງານ | 1.2.1.1 ມີຄວາມຮູ້ຄວາມເຂົ້າໃຈ ຄວາມສຳຄັນ ແລະ ຫລັກການຂອງກົດໝາຍທົ່ວໄປ, ກົດໝາຍທີ່ກ່ຽວຂ້ອງກັບການປະຕິບັດວິຊາຊີບ |
| | 1.2.2 ການປະຕິບັດວິຊາຊີບສອດ ຄ່ອງກັບຂໍ້ກຳນົດກົດລະບຽບທີ່ກ່ຽວກັບຢາ, ອາຫານ ແລະ ຜະລິດຕະພັນການແພດ | 1.2.2.1 ມີຄວາມຮູ້ຄວາມເຂົ້າໃຈໃນການວິເຄາະການປະຕິບັດວຽກງານວ່າ ເປັນໄປ ຕາມຂໍ້ກຳນົດກົດລະບຽບດ້ານຢາ, ອາຫານ ແລະ ຜະລິດຕະພັນການແພດຂໍ້ໃດ |
| 1.3 ການເປັນຜູ້ທີ່ມີຈັນຍາທາໃນວິຊາຊີບ | 1.3.1 ການປະຕິບັດວິຊາຊີບສອດຄ່ອງກັບຈັນຍາທຳວິຊາຊີບ | 1.3.1.1 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບຫລັກການຈັນຍາທຳໃນ ວິຊາຊີບ |
| | | 1.3.1.2 ມີຄວາມສາມາດໃນການວິເຄາະການປະຕິບັດວ່າເປັນໄປຕາມຫລັກການຈັນຍາທຳໃນວິຊາຊີບຂໍ້ໃດ |
| 1.4 ການໃຫ້ບໍລິການທີ່ຄານຶງເຖິງຜູ້ຮັບເປັນສຳຄັນ | 1.4.1 ການໃຫ້ຄວາມສຳຄັນຕໍ່ ສິດຂອງຄົນເຈັບ ແລະ ຜູ້ຮັບບໍລິການ | 1.4.1.1 ມີຄວາມຮູ້ ຄວາມເຂົ້າໃຈໃນສິດຂອງຄົນເຈັບ ການຮັກສາຄວາມລັບຂອງຄົນເຈັບ |
| | | 1.4.1.2 ມີຄວາມຮູ້ ຄວາມເຂົ້າໃຈໃນຫລັກການແນວຄິດ ທີ່ຍຶດຖືຜູ້ຮັບບໍລິການເປັນສຳຄັນ |
| ໝວດທີ 2: ການເຮັດວຽກເປັນໝູ່ຄະນະ ແລະ ເປັນລະບົບ | | |
| 2.1. ການຈັດການລະບົບທີ່ມີປະສິດທິພາບ | 2.1.1 ໂຄງປະກອບສ້າງ ແລະ ຫລັກການບໍລິຫານທີ່ເປັນ ລະບົບ | 2.1.1.1 ມີຄວາມຮູ້ ຄວາມເຂົ້າໃຈ ຫລັກການບໍລິຫານ ລວມທັງ ປັດໃຈນຳເຂົ້າ ຂະບວນການ ແລະ ຜົນໄດ້ຮັບ |
| | | 2.1.1.2 ມີຄວາມຮູ້ ຄວາມເຂົ້າໃຈ ລະບົບພັດທະນາຄຸນນະພາບຂອງວຽກງານ |
| | | 2.1.1.3 ສາມາດກຳນົດຕົວຊີ້ວັດທີ່ເໝາະສົມ |
| | 2.1.2 ການໃຫ້ຄວາມສຳຄັນຕໍ່ຄຸນນະພາບຂອງການປະຕິບັດວຽກງານ | 2.1.2.1 ມີຄວາມຮູ້ ຄວາມເຂົ້າໃຈ ໃນຂະບວນການຄຸນນະພາບໃນການໃຫ້ບໍລິການ |

| ມາດຕະຖານຂີດຄວາມສາມາດ (competency standard) | ອົງປະກອບ (element) | ຂໍ້ກຳນົດໃນການປະຕິບັດ (performance criteria) |
|---|---|---|
| 2.2 ການເຮັດວຽກເປັນໝູ່ຄະນະ | 2.2.1 ການມີສ່ວນຮ່ວມໃນການ ເຮັດວຽກເປັນໝູ່ຄະນະ | 2.2.1.1 ມີຄວາມຮູ້ ຄວາມເຂົ້າໃຈ ຍອມຮັບຄຸນຄ່າຂອງ ການເຮັດວຽກເປັນໝູ່ຄະນະ ເພື່ອປັບປຸງການເບິ່ງແຍງຜູ້ຮັບບໍລິການ |
| | | 2.2.1.2 ຍອມຮັບ ແລະ ໃຫ້ຄວາມສຳຄັນຕໍ່ສິດທັກສະ ແລະ ການສະແດງອອກຂອງສະມາຊິກໃນຄະນະ |
| | 2.2.2 ສົ່ງເສີມປະສິດທິພາບການ ເຮັດວຽກເປັນໝູ່ຄະນະ | 2.2.2.1 ຍອມຮັບ ເຂົ້າໃຈ ຄວາມຫລາກຫລາຍຂອງ ການເຮັດວຽກເປັນໝູ່ຄະນະ |
| | | 2.2.2.2 ສາມາດລະບຸໂອກາດພັດທະນາ ແລະ ຜົນໄດ້ຮັບ ຈາກການເຮັດວຽກເປັນໝູ່ຄະນະ |
| 2.3 ການແກ້ໄຂບັນຫາຂັ້ນຕົ້ນ | 2.3.1 ການວິເຄາະບັນຫາ ຫລື ເງື່ອນໄຂທີ່ສົ່ງຜົນໃຫ້ເກີດ ບັນຫາ | 2.3.1.1 ສາມາດບົ່ງບອກບັນຫາ ແລະ ປັດໄຈສາເຫດເບື້ອງຕົ້ນ ຕະຫລອດຮອດປັດໄຈທາງຊັບພະຍາກອນ ທີ່ນຳ ໃຊ້ເຂົ້າໃນການບໍລິຫານ |
| | | 2.3.1.2 ສາມາດບົ່ງບອກວິທີທາງ ການວາງແຜນໃນ ການຈັດການບັນຫາ ແລະ ການນຳສະເໜີ |
| | | 2.3.1.3 ສາມາດບັນທຶກການດຳເນີນການ |
| ໝວດທີ 3: ການສະໜອງຂໍ້ມູນຂ່າວສານ ແລະ ຄວາມຮູ້ | | |
| 3.1 ການບໍລິຫານຈັດການກ່ຽວກັບຂໍ້ມູນຂ່າວສານ | 3.1.1 ການຈັດການຊັບພະຍາກອນ ແລະ ລະບົບຂໍ້ມູນຂ່າວສານ | 3.1.1.1 ສາມາດເລືອກແຫລ່ງຂໍ້ມູນທາງຢາ ແລະ ບອກ ຈຸດດີ ຫລື ການເລືອກໃຊ້ຂໍ້ມູນແຕ່ລະປະເພດ |
| | | 3.1.1.2 ສາມາດປະເມີນຄວາມໜ້າເຊື່ອຖືຂອງແຫລ່ງຂໍ້ມູນ |
| 3.2 ການສື່ສານທີ່ມີປະສິດທິພາບ | 3.2.1 ການໃຫ້ຄວາມສຳຄັນຕໍ່ປັດໄຈທາງສັງຄົມທີ່ມີຕໍ່ການສື່ສານ | 3.2.1.1 ມີຄວາມຮູ້ ຄວາມເຂົ້າໃຈ ຜົນກະທົບຈາກຄ່ານິຍົມ ຄວາມເຊື່ອ ແລະ ພື້ນຖານການເປັນຢູ່ ຂອງຜູ້ຮັບບໍລິການ |
| | 3.2.2 ສາມາດນຳໃຊ້ຫລັກການ ການສື່ສານທຸກຊ່ອງທາງໃນ ສະຖານະການຕ່າງໆໄດ້ຢ່າງ ເໝາະສົມ | 3.2.2.1 ມີຄວາມຮູ້ ຄວາມເຂົ້າໃຈ ຫລັກການສື່ສານ ດ້ວຍຄຳເວົ້າ ແລະ ລັກສະນະທ່າທີ |
| | | 3.2.2.2 ມີຄວາມຮູ້ ຄວາມເຂົ້າໃຈ ອຸປະສັກຂອງການສື່ສານ ໃນສ່ວນຂອງຜູ້ຮັບບໍລິການ |
| | | 3.2.2.3 ມີທັກສະໃນການສື່ສານເພື່ອເພີ່ມປະສິດທິພາບ ໃນການເບິ່ງແຍງຜູ້ຮັບບໍລິການ |
| | | 3.2.2.4 ສາມາດລະບຸແນວທາງໃນການຈັດການອຸປະສັກ ຕ່າງໆດ້ານການສື່ສານ |

| ມາດຕະຖານຂີດຄວາມສາມາດ (competency standard) | ອົງປະກອບ (element) | ຂໍ້ກຳນົດໃນການປະຕິບັດ (performance criteria) |
|---|---|---|
| 3.3 ການໃຫ້ຄວາມຮູ້ | 3.3.1 ການເຜີຍແຜ່ຄວາມຮູ້ ໃຫ້ຜູ້ຮັບບໍລິການ ໄດ້ມີຂໍ້ ມູນເພື່ອຕັດສິນໃຈ | 3.3.1.1 ສາມາດຄັດເລືອກແຫລ່ງຂໍ້ມູນໄດ້ສອດຄ່ອງກັບ ຄວາມຕ້ອງການຂອງຜູ້ຮັບບໍລິການ |
| | | 3.3.1.2 ສາມາດໃຫ້ຂໍ້ມູນ ແລະ ເລືອກແນວທາງການໃຫ້ ບໍລິການແກ່ຜູ້ຮັບບໍລິການໄດ້ຢ່າງ ເໝາະສົມ |
| | | 3.3.1.3 ສາມາດຕອບຄຳຖາມດ້ານຢາຜະລິດຕະພັນການແພດ ແລະ ອາຫານເສີມແກ່ຜູ້ຮັບບໍລິການ ໄດ້ຢ່າງຖືກຕ້ອງ ເໝາະສົມເພື່ອສົ່ງເສີມປະສິດທິພາບການໃຊ້ຢາ, ຜະລິດຕະພັນການແພດ ແລະ ອາຫານເສີມທີ່ເໝາະສົມ ແລະ ມີຄວາມ ປອດໄພ |
| | | 3.3.1.4 ສາມາດເລືອກຊ່ອງທາງການເຜີຍແຜ່ ສື່ ແລະ ການໃຫ້ຂໍ້ມູນໄດ້ຢ່າງເໝາະສົມສຳຫລັບຂໍ້ມູນແຕ່ລະປະເພດ ແລະ ຜູ້ຮັບບໍລິການ |
| ໝວດທີ 4: ການປະຕິບັດກ່ຽວກັບການຜະລິດ ແລະ ການຄວບຄຸມຄຸນນະພາບຜະລິດຕະພັນຢາຫລວງ, ຢາພື້ນເມືອງ, ອາຫານເສີມສຸຂະພາບ, ເຄມີເພສັຊ, ອາຫານ ແລະ ເຄື່ອງສຳອາງ | | |
| 4.1 ການໝູນໃຊ້ຄວາມຮູ້ດ້ານຮູບແບບຜະລິດຕະພັນຢາເຂົ້າກັບການປະຕິບັດວຽກງານ | 4.1.1 ຂະບວນການປຸງແຕ່ງ ຜະລິດຕະພັນຢາຮູບແບບ ຕ່າງໆ ແລະ ຢາພື້ນເມືອງ | 4.1.1.1 ສາມາດຄົ້ນຫາລາຍລະອຽດຕ່າງໆ ທີ່ກ່ຽວກັບການປຸງແຕ່ງຢາພື້ນຖານຈາກແຫລ່ງຂໍ້ມູນທາງເພສັຊສາດ |
| | | 4.1.1.2 ມີຄວາມຮູ້ ຄວາມເຂົ້າໃຈ ຂະບວນການຂັ້ນຕອນການຜະລິດ ແລະ ສາມາດປຸງແຕ່ງຕຳລາຢາພື້ນຖານ ແລະ ຕຳລາຢາທີ່ໃຊ້ໃນໂຮງໝໍ |
| | | 4.1.1.3 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບຮູບແບບ ຢາຜະລິດຕະພັນສຸຂະພາບ ກັບການນຳໄປໃຊ້ ປະໂຫຍດ |
| | | 4.1.1.4 ສາມາດບອກຄວາມແຕກຕ່າງ ຈຸດດີ ຈຸດ ອ່ອນຂອງຮູບແບບຢາແຕ່ລະປະເພດ ແລະ ຜົນກະທົບທີ່ມີຕໍ່ປະສິດທິພາບ ແລະ ຄວາມປອດໄພຂອງການປິ່ນປົວ |
| | | 4.1.1.5 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບປັດໄຈທີ່ມີຜົນກະທົບຕໍ່ຜະລິດຕະພັນຢາ (ເຊັ່ນ ຄວາມ ຄົງຕົວ) ຫລື ສ່ວນປະກອບຂອງຢາ |
| | | 4.1.1.6 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບຫລັກ ການ ແລະ ຂັ້ນຕອນການພັດທະນາຜະລິດຕະພັນ ຈົນເຖິງການຂຶ້ນທະບຽນ |
| | | 4.1.1.7 ມີຄວາມສາມາດໃນການພິຈາລະນາຢາເຊື່ອມຄຸນນະພາບ ແລະ ບົ່ງບອກອາຍຸຂອງຢາໄດ້ |

| ມາດຕະຖານຂີດຄວາມສາມາດ (competency standard) | ອົງປະກອບ (element) | ຂໍ້ກຳນົດໃນການປະຕິບັດ (performance criteria) |
|---|---|---|
| 4.2 ການຄວບຄຸມຄຸນນະພາບຂອງຜະລິດຕະພັນຢາຫລວງ, ເຄມີເພສັຊ, ອາຫານ ແລະ ເຄື່ອງສຳອາງ | 4.2.1 ຄວາມເຂົ້າໃຈຂະບວນການຄວບຄຸມຄຸນນະພາບ | 4.2.1.1 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບຫລັກການຄວບຄຸນນະພາບຢາຫລວງ, ເຄມີເພສັຊ, ອາຫານ, ເຄື່ອງສຳອາງ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ |
| | | 4.2.1.2 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບຫລັກການ ວິທີການວິໄຈພື້ນຖານ |
| | | 4.2.1.3 ສາມາດອ່ານຜົນການວິໄຈ ແລະ ແປຄວາມໝາຍໄດ້ |
| | | 4.2.1.4 ສາມາດສືບຄົ້ນຂໍ້ມູນຈາກແຫລ່ງຂໍ້ມູນຫລືຕຳລາຢາທີ່ຖືກຮັບຮອງ |
| 4.3 ຢາພື້ນເມືອງ ແລະ ການຄວບຄຸມຄຸນນະພາບ | 4.3.1 ຄວາມເຂົ້າໃຈດ້ານການຂຶ້ນທະບຽນຢາພື້ນເມືອງ ແລະ ຂະບວນການຄວບຄຸມຄຸນນະພາບ | 4.3.1.1 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບຫລັກການຂັ້ນຕອນການຂຶ້ນທະບຽນຢາພື້ນເມືອງ |
| | | 4.3.1.2 ມີຄວາມຮູ້ ຄວາມເຂົ້າໃຈແນວທາງການຄວບຄຸມຄຸນນະພາບຢາພື້ນເມືອງ |
| | | 4.3.1.3 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບພຶດທີ່ເປັນຢາ |
| ໝວດທີ 5: ການຈັດຫາຢາ | | |
| 5.1 ການຈັດຫາຢາເພື່ອການໃຫ້ບໍລິການໄດ້ຢ່າງ ມີຄຸນນະພາບ | 5.1.1 ຄຸນລັກສະນະຂອງຢາທີ່ຕ້ອງໃຫ້ຄວາມສຳຄັນໃນການຈັດຫາ | 5.1.1.1 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບການການົດຄຸນລັກສະນະຢາທີ່ຕ້ອງຈັດຫາ (Drug specification) |
| | | 5.1.1.2 ມີຄວາມຮູ້ ຄວາມເຂົ້າໃຈອົງປະກອບຂອງໃບຢັ້ງຢືນຄຸນນະພາບ (certificate of analysis) |
| | | 5.1.1.3 ສາມາດແປຜົນໃບຢັ້ງຢືນຄຸນນະພາບ |
| | 5.1.2 ການຈັດຫາຢາຢ່າງເໝາະສົມ | 5.1.2.1 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບແຫລ່ງທີ່ມາ, ຫລັກການຈັດ ຫາຢາທີ່ສອດຄ່ອງກັບ ສະຖານະການ ຄວາມຕ້ອງການ ໃນປະລິມານທີ່ເໝາະສົມ ແລະ ທັນເວລາ |
| | | 5.1.2.2 ມີຄວາມຮູ້ ຄວາມສາມາດເຂົ້າເຖິງຂໍ້ມູນທີ່ເຊື່ອຖືໄດ້ ແລະ ຮັບປະກັນລາຄາຢາທີ່ສົມເຫດສົມຜົນ ແລະ ຄຸນນະພາບທີ່ເໝາະສົມ |
| | | 5.1.2.3 ມີຄວາມຮູ້ ຄວາມເຂົ້າໃຈການຈັດຕັ້ງປະຕິບັດແຜນສຸກເສີນສຳຫລັບການຂາດແຄນຢາ |

| | | |
|---|---|---|
| | | 5.1.2.4 ເຂົ້າໃຈວິທີການ, ຂັ້ນຕອນການປະມູນ ແລະ ປະເມີນຜົນການປະມູນ |
| | | 5.1.2.5 ມີຄວາມເຂົ້າໃຈກ່ຽວກັບການຮັບປະກັນ ຂະບວນການການເກັບຮັກສາ,ການຈັດສົ່ງ ແລະ ແຈກຢາຍຢາ ແລະ ຜະລິດຕະພັນການແພດ |
| 5.2 ການຄວບຄຸມເກັບຮັກສາຢາເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພ | 5.2.1 ການວາງລະບົບການເກັບຮັກສາ ແລະ ການຄວບ ຄຸມຜະລິດຕະພັນ | 5.2.1.1 ມີຄວາມເຂົ້າໃຈກ່ຽວກັບການຮັບປະກັນ ການບໍລິຫານຄຸ້ມຄອງສາງຢ່າງມີປະສິດທິພາບ |
| | | 5.2.1.2 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບຂັ້ນຕອນ, ພາວະ ແລະ ເງື່ອນໄຂໃນການເກັບຮັກສາ |
| | | 5.2.1.3 ມີຄວາມຮູ້ ຄວາມເຂົ້າໃຈແນວທາງການຄວບຄຸມ ການເບີກຈ່າຍທັງໃນໜ່ວຍງານ ແລະ ເຄືອຂ່າຍ |
| | | 5.2.1.4 ສາມາດບົ່ງບອກເງື່ອນໄຂລະບົບການຄວບຄຸມ ການຕິດຕາມກວດກາການຄວບຄຸມການເກັບ ຮັກສາຢາ ຜະລິດຕະພັນການແພດເພື່ອຮັບປະກັນ ຄຸນນະພາບ ແລະ ຄວາມປອດໄພ |
| ໝວດທີ່ 6: ການບໍລິບານທາງເພສັຊກັມເບື້ອງຕົ້ນ ແລະ ການໃຊ້ຢາພື້ນເມືອງ | | |
| 6.1 ການເບິ່ງແຍງຄົນເຈັບ | 6.1.1 ການເບິ່ງແຍງຄົນເຈັບໂດຍລວມ | 6.1.1.1 ມີຄວາມຮູ້ ຄວາມເຂົ້າໃຈລະບົບຄວາມເຊື່ອ ແລະ ພຶດຕິກຳທົ່ວໄປຂອງຄົນເຈັບ/ຜູ້ຮັບບໍລິການ |
| | | 6.1.1.2 ມີຄວາມຮູ້ ຄວາມເຂົ້າໃຈ ປັດໄຈທີ່ມີຜົນຕໍ່ພຶດຕິກຳສຸຂະພາບ |
| | | 6.1.1.3 ມີຄວາມຮູ້ ຄວາມເຂົ້າໃຈລະບົບການບໍລິການຢ່າງມີມະນຸດສະທຳ, ມີສະຕິ ແລະ ຄວາມຮັບຜິດຊອບຕໍ່ວິຊາຊີບ |
| | | 6.1.1.4 ສາມາດສື່ສານກັບຄົນເຈັບ ແລະ ພີ່ນ້ອງຄົນເຈັບເພື່ອໃຫ້ໄດ້ຂໍ້ມູນໃນການປະເມີນຄວາມຮ່ວມມືໃນການໃຊ້ຢາ |
| 6.2 ການປະເມີນຄາສັ່ງໃຊ້ຢາ | 6.2.1 ການປະເມີນ ແລະ ຮັບປະກັນຄວາມຖືກຕ້ອງຂອງຄຳສັ່ງໃຊ້ຢາ | 6.2.1.1 ມີຄວາມຮູ້ ຄວາມເຂົ້າໃຈ ອົງປະກອບຂອງປຶ້ມບັນທຶກ ຫລື ເອກະສານສຳຄັນທີ່ກ່ຽວຂ້ອງກັບການປິ່ນປົວ |
| | | 6.2.1.2 ມີຄວາມຮູ້ ຄວາມເຂົ້າໃຈ ຫລັກການ ແລະ ແນວທາງການວິເຄາະໃບສັ່ງຢາ ເພື່ອປ້ອງກັນການຜິດພາດ |
| | | 6.2.1.3 ມີຄວາມຮູ້ ຄວາມເຂົ້າໃຈ ອົງປະກອບຂອງໃບສັ່ງຢາ/ຄຳສັ່ງໃຊ້ຢາທີ່ເໝາະສົມ ແລະ ສອດຄ່ອງກັບຂໍ້ກຳນົດກົດລະບຽບຕ່າງໆ |

| ມາດຕະຖານຂີດຄວາມສາມາດ (competency standard) | ອົງປະກອບ (element) | ຂໍ້ກຳນົດໃນການປະຕິບັດ (performance criteria) |
|---|---|---|
| | | 6.2.1.4 ມີຄວາມຮູ້ ຄວາມສາມາດໃນການຄິດໄລ່ທາງເພສັຊກັມເພື່ອຮັບປະກັນຄວາມຖືກຕ້ອງຂອງການສັ່ງໃຊ້ຢາ ການຈ່າຍຢາ ການບໍລິຫານຢາຢ່າງເໝາະສົມ |
| | | 6.2.1.5 ມີຄວາມຮູ້ ຄວາມເຂົ້າໃຈ ປະເພດຂອງຄວາມຜິດພາດທາງຢາ ແລະ ສາມາດບົ່ງບອກຄວາມຜິດພາດຂອງຢາເບື້ອງຕົ້ນໄດ້ |
| | | 6.2.1.6 ສາມາດປະເມີນຄວາມຖືກຕ້ອງ ຄົບຖ້ວນຂອງໃບສັ່ງຢາ ເພື່ອປ້ອງກັນຄວາມຜິດພາດ |
| | | 6.2.1.7 ມີຄວາມຮູ້ ແລະ ເຂົ້າໃຈຫລັກການ ແລະສາມາດອະທິບາຍການແບ່ງປະເພດຂອງບັນຫາທີ່ກ່ຽວກັບການໃຊ້ຢາໄດ້ |
| | | 6.2.1.8 ສາມາດບົ່ງບອກແນວທາງໃນການສື່ສານ ແລະ ແກ້ໄຂບັນຫາເບື້ອງຕົ້ນ ຫາກພົບວ່າຄຳສັ່ງໃຊ້ຢາມີຄວາມຜິດພາດບໍ່ເໝາະສົມ |
| 6.3 ຂະບວນການຈ່າຍຢາ | 6.3.1 ການຮັບປະກັນຄວາມຖືກຕ້ອງ | 6.3.1.1 ມີຄວາມຮູ້ ຄວາມເຂົ້າໃຈອົງປະກອບຂອງສະຫລາກຢາ |
| | | 6.3.1.2 ມີທັກສະໃນການຂຽນສະຫລາກຢາເພື່ອປະສິດທິພາບການປິ່ນປົວ ແລະ ຄວາມປອດໄພ |
| | | 6.3.1.3 ມີທັກສະໃນການປະຕິບັດງານຕາມຫລັກການຈ່າຍຢາທີ່ດີ |
| | | 6.3.1.4 ມີຄວາມຮູ້ ຄວາມເຂົ້າໃຈ ຫລັກການສົ່ງມອບຢາທີ່ດີເພື່ອປ້ອງກັນຄວາມຜິດພາດ |
| | | 6.3.1.5 ສາມາດບົ່ງບອກແນວທາງໃນການຈັດການປັດໄຈສາເຫດທີ່ເຮັດໃຫ້ເກີດຄວາມຜິດພາດຂອງການຈ່າຍຢາ |
| | | 6.3.1.6 ສາມາດຄັດເລືອກເຄື່ອງຫຸ້ມຫໍ່ທີ່ເໝາະສົມກັບຢາ |
| | | 6.3.1.7 ສາມາດໃຫ້ຄາແນະນາການໃຊ້ຢາທີ່ມີເທັກນິກການໃຊ້ພິເສດ |
| 6.4 ການສົ່ງເສີມການໃຊ້ຢາຢ່າງເໝາະສົມ | 6.4.1 ການລວບລວມຂໍ້ມູນ ປະກອບການເລືອກໃຊ້ຢາ | 6.4.1.1 ເຂົ້າໃຈ ແລະ ຮັບຮູ້ຄວາມສາຄັນຂອງການສຳພາດຄົນເຈັບ |
| | | 6.4.1.2 ຄວາມຮູ້ ຄວາມເຂົ້າໃຈ ແນວທາງການໄດ້ມາຊຶ່ງຂໍ້ມູນ ແລະ ປະຫວັດການໃຊ້ຢາ |

| ມາດຕະຖານຂີດຄວາມສາມາດ (competency standard) | ອົງປະກອບ (element) | ຂໍ້ກຳນົດໃນການປະຕິບັດ (performance criteria) |
|---|---|---|
| | | 6.4.1.3 ສາມາດສື່ສານ ສາພາດ ເພື່ອຫາຂໍ້ມູນຢ່າງມີເປົ້າໝາຍ ແລະ ເໝາະສົມ |
| | | 6.4.1.4 ສາມາດຊອກຄົ້ນຂໍ້ມູນທີ່ໃຊ້ປະກອບການເຮັດວຽກເພື່ອສົ່ງເສີມການໃຊ້ຢາຢ່າງເໝາະສົມ |
| | 6.4.2 ການເລືອກໃຊ້ຢາຢ່າງ ເໝາະສົມ | 6.4.2.1 ມີຄວາມຮູ້ ຄວາມເຂົ້າໃຈ ເພສັຊວິທະຍາຂອງຢາ ທັງໃນດ້ານວົງຈອນຊີວິດຂອງຢາໃນຮ່າງກາຍ, ການອອກລິດຂອງຢາ, ການເກີດປະຕິກິລິຍາຕໍ່ກັນຂອງຢາ ແລະ ພິດເບື່ອຂອງຢາ |
| | | 6.4.2.2 ສາມາດໝູນໃຊ້ຄວາມຮູ້ທາງເພສັຊວິທະຍາໃນການໃຫ້ບໍລິການໂດຍເໜັ້ນໃສ່ໃຫ້ໄດ້ຮັບການປິ່ນປົວທີ່ມີປະສິດທິພາບ ແລະ ປອດໄພ |
| | | 6.4.2.3 ສາມາດໝູນໃຊ້ຄວາມຮູ້ດ້ານຜະລິດຕະພັນຢາທີ່ເໝາະສົມເພື່ອຄວາມຮ່ວມມື ແລະ ສອດຄ່ອງກັບເງື່ອນໄຂຂອງຄົນເຈັບ |
| | | 6.4.2.4 ມີຄວາມຮູ້ ຄວາມເຂົ້າໃຈ ການປິ່ນປົວດ້ວຍຢາສຳຫລັບກຸ່ມພະຍາດທີ່ສຳຄັນ ເຫດຜົນຂອງການສັ່ງໃຊ້ຢາ |
| | | 6.4.2.5 ມີຄວາມຮູ້ ຄວາມເຂົ້າໃຈໃນຜົນການກວດຮ່າງກາຍ ແລະ ການໃຊ້ຜົນທາງຫ້ອງວິເຄາະໃນການປິ່ນປົວ ແລະ ການຕິດຕາມຜົນໃນຄົນເຈັບ |
| 6.5 ການຈັດການອາການຂ້າງຄຽງທີ່ເກີດຂຶ້ນຈາກການໃຊ້ຢາ | 6.5.1 ການດຳເນີນການດ້ານ ອາການຂ້າງຄຽງທີ່ເກີດຂຶ້ນຈາກຢາ | 6.5.1.1 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບອາການຂ້າງຄຽງທີ່ເກີດຂຶ້ນຈາກຢາ ການແບ່ງປະເພດ |
| | | 6.5.1.2 ມີຄວາມຮູ້ ຄວາມເຂົ້າໃຈ ແລະ ມີຄວາມສາມາດປະເມີນສາເຫດທີ່ອາດພາໃຫ້ເກີດອາການຂ້າງຄຽງຈາກຢາທີ່ກ່ຽວຂ້ອງ |
| | | 6.5.1.3 ສາມາດບັນທຶກໃບລາຍງານຂ້າງຄຽງຈາກຢາໄດ້ຢ່າງຖືກຕ້ອງ |
| | | 6.5.1.4 ສາມາດສອບຖາມປະຫວັດເພື່ອປ້ອງການການ ເກີດອາຂ້າງຄຽງຈາກການໃຊ້ຢາທີ່ເຄີຍມີປະຫວັດ ການແພ້ຢາ |
| 6.6 ການໃຊ້ພືດທີ່ເປັນຢາ ແລະ ຢາພື້ນເມືອງ | 6.6.1 ການສົ່ງເສີມການໃຊ້ຢາພື້ນເມືອງ, ພືດທີ່ເປັນຢາໃນການຮັກສາສຸຂະພາບ | 6.6.1.1 ຮູ້ຈັກຢາພື້ນເມືອງ, ພືດທີ່ເປັນຢາ ທີ່ມີໃນບັນຊີຢາຈຳເປັນພື້ນຖານ ແລະ ສາທາລະນະສຸກພື້ນຖານ ພ້ອມຫລັກການໃຊ້ຢ່າງມີປະສິດທິພາບ ແລະ ປອດໄພ |

| ມາດຕະຖານຂີດຄວາມສາມາດ (competency standard) | ອົງປະກອບ (element) | ຂໍ້ກຳນົດໃນການປະຕິບັດ (performance criteria) |
|---|---|---|
| | | 6.6.1.2 ມີຄວາມຮູ້ ຄວາມເຂົ້າໃຈ ພ້ອມທັງສາມາດ ບົ່ງບອກປະເພດ ແລະ ປະໂຫຍດຂອງຢາພື້ນເມືອງໃນການຮັກສາສຸຂະພາບຂັ້ນຕົ້ນ |
| | | 6.6.1.3 ສາມາດຊອກຄົ້ນຂໍ້ມູນຢາພື້ນເມືອງໃນ ບັນຊີຢາຈຳເປັນພື້ນຖານ |
| | | 6.6.1.4 ສາມາດແນະນຳການໃຊ້ ຂໍ້ຄວນລະວັງໃນການໃຊ້ຢາພື້ນເມືອງເພື່ອປິ່ນປົວຕົນເອງ |
| ໝວດທີ່ 7: ລະບົບສາທາລະນະສຸກ ແລະ ລະບົບສຸຂະພາບ | | |
| 7.1 ລະບົບສາທາລະນະສຸກ | 7.1.1 ເຂົ້າໃຈລະບົບສາທາ ລະນະສຸກ | 7.1.1.1 ມີຄວາມຮູ້ ຄວາມເຂົ້າໃຈໂຄງປະກອບສ້າງ ແລະ ໜ້າທີ່ຂອງລະບົບສາທາລະນະສຸກຂອງປະ ເທດ ຕະຫລອດຮອດປັດໄຈທີ່ມີຜົນກະທົບ |
| | | 7.1.1.2 ມີຄວາມຮູ້ ຄວາມເຂົ້າໃຈ ແລະ ຄວາມເຊື່ອມໂຍງຂອງໜ່ວຍງານສາທາລະນະສຸກ |
| | 7.1.2 ການວາງແຜນແກ້ໄຂ ບັນຫາສາທາລະນະ ສຸກ | 7.1.2.1 ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບການຊອກຫາ ແລະ ຈັດລຳດັບຄວາມສຳຄັນຂອງບັນຫາສາທາລະນະສຸກ |
| | | 7.1.2.2 ມີຄວາມຮູ້ ຄວາມເຂົ້າໃຈດ້ານການວາງແຜນເພື່ອແກ້ໄຂບັນຫາສາທາລະນະສຸກ |
| 7.2 ລະບົບຢາ | 7.2.1 ເຂົ້າໃຈລະບົບຢາ ຂອງປະເທດ ຫລັກການ ແລະ ການດຳເນີນງານ | 7.2.1.1 ມີຄວາມຮູ້ ຄວາມເຂົ້າໃຈ ນະໂຍບາຍແຫ່ງຊາດດ້ານຢາ ແລະ ການພັດທະນາລະບົບຢາຂອງປະເທດ |
| | | 7.2.1.2 ມີຄວາມຮູ້ ຄວາມເຂົ້າໃຈໂຄງປະກອບ ສ້າງ ແລະ ຄວາມ ເຊື່ອມໂຍງຂອງໜ່ວຍງານດ້ານລະບົບຢາພາຍໃນປະເທດ |
| | 7.2.2 ລະບົບຢາໃນໂຮງໝໍ | 7.2.2.1 ມີຄວາມຮູ້ ຄວາມເຂົ້າໃຈປັດໄຈທີ່ມີຜົນກະທົບຕໍ່ລະບົບຢາໃນໂຮງໝໍ |
| | | 7.2.2.2 ມີຄວາມຮູ້ ຄວາມເຂົ້າໃຈດ້ານການວາງແຜນເພື່ອແກ້ໄຂ ແລະ ປ້ອງກັນບັນຫາຈາກປັດໄຈທີ່ສົ່ງຜົນກະທົບ |

| ມາດຕະຖານຂີດຄວາມສາມາດ (competency standard) | ອົງປະກອບ (element) | ຂໍ້ກໍານົດໃນການປະຕິບັດ (performance criteria) |
|---|---|---|
| 7.3 ລະບົບການຄຸ້ມຄອງຜູ້ບໍລິໂພກດ້ານຢາ, ອາຫານ, ເຄື່ອງສໍາອາງ ແລະ ສຸຂະພາບ | 7.3.1 ເຂົ້າໃຈຫລັກການແລະ ການດໍາເນີນງານ ຂອງ ລະບົບການຄຸ້ມຄອງຜູ້ບໍລິໂພກດ້ານຢາ, ອາຫານ, ເຄື່ອງສໍາອາງ ແລະ ສຸຂະພາບ | 7.3.1.1 ມີຄວາມຮູ້ ຄວາມເຂົ້າໃຈຫລັກການດ້ານລະບາດວິທະຍາເບື້ອງຕົ້ນ |
| | | 7.3.1.2 ມີຄວາມຮູ້ ຄວາມເຂົ້າໃຈເລື່ອງການບໍລິຫານຄວາມສ່ຽງເບື້ອງຕົ້ນ |
| | | 7.3.1.3 ມີຄວາມຮູ້ ຄວາມເຂົ້າໃຈໃນໂຄງປະກອບ ສ້າງ ແລະ ໜ້າທີ່ຂອງລະບົບຄຸ້ມຄອງຜູ້ບໍລິໂພກ ດ້ານຢາ, ອາຫານ, ເຄື່ອງສໍາອາງ ແລະ ສຸຂະພາບ |

# ຄຸນລັກສະນະຂອງຂີດຄວາມສາມາດຫລັກຂອງເພສັຊກອນ

## ໝວດທີ່ 1: ການປະຕິບັດໜ້າທີ່ດ້ານວິຊາຊີບຢ່າງມີຈັນຍາທຳ ແລະ ຖືກຕ້ອງຕາມກົດໝາຍ

ມາດຕະຖານ 1.1 ການເປັນຜູ້ທີ່ມີສິນລະທຳ

ມາດຕະຖານ 1.2 ການປະຕິບັດວິຊາຊີບຖືກຕ້ອງຕາມລະບຽບກົດໝາຍ

ມາດຕະຖານ 1.3 ການເປັນຜູ້ທີ່ມີຈັນຍາທຳໃນວິຊາຊີບ

ມາດຕະຖານ 1.4 ການໃຫ້ບໍລິການທີ່ຄຳນຶງເຖິງຜູ້ຮັບເປັນສຳຄັນ

**ເປົ້າໝາຍ**

ເພື່ອໃຫ້ເພສັຊກອນເປັນຜູ້ທີ່ມີສິນລະທຳ ຈັນຍາທຳ ໂດຍຄຳນຶງເຖິງການປະຕິບັດວິຊາຊີບທີ່ຖືກຕ້ອງ ມີຈັນຍາທຳ, ຖືກຕ້ອງຕາມລະບຽບກົດໝາຍ ແລະ ຕາມຂໍ້ກຳນົດກົດລະບຽບຕ່າງໆທີ່ທາງຂັ້ນເທິງວາງອອກ ຕະຫລອດຮອດການໃຫ້ບໍລິການທີ່ຖືເອົາຜູ້ຮັບບໍລິການເປັນສຳຄັນ

**ຈຸດປະສົງດ້ານຄວາມຮູ້**

ເພສັຊກອນຕ້ອງສາມາດ:

1. ອະທິບາຍຫລັກການສິນລະທຳພື້ນຖານ
2. ອະທິບາຍຄວາມສາຄັນຂອງກົດໝາຍທົ່ວໄປ, ກົດໝາຍທີ່ກ່ຽວຂ້ອງກັບວິຊາຊີບ
3. ອະທິບາຍຫລັກການ ແລະ ເນື້ອໃນສາຄັນຂອງຂໍ້ການົດກົດລະບຽບທີ່ກ່ຽວຂ້ອງກັບວຽກງານເພສັຊກັມ
4. ອະທິບາຍເນື້ອໃນ ແລະ ຄວາມສາຄັນຂອງການມີຈັນຍາທາໃນວິຊາຊີບ
5. ອະທິບາຍຫລັກການ ແນວຄວາມຄິດທີ່ຖືເອົາຜູ້ຮັບບໍລິການເປັນສາຄັນ

**ຈຸດປະສົງດ້ານທັກສະ**

ເພສັຊກອນຕ້ອງສາມາດ:

1. ປະເມີນໄດ້ວ່າການກະທຳ ພຶດຕິກຳໃດບໍ່ເໝາະສົມ ຫລື ບໍ່ສອດຄ່ອງກັບສິນລະທຳ
2. ວິເຄາະໄດ້ວ່າການປະຕິບັດວຽກງານ ຫລື ກໍລະນີສຶກສາ ມີຄວາມກ່ຽວພັນກັບຂໍ້ການົດກົດລະບຽບແນວໃດ
3. ວິເຄາະໄດ້ວ່າການປະຕິບັດວຽກງານ ຫລື ກໍລະນີສຶກສາມີຄວາມກ່ຽວພັນກັບຈັນຍາທາໃນວິຊາຊີບຂໍ້ໃດ

## ໝວດທີ່ 2: ການເຮັດວຽກເປັນໝູ່ຄະນະ ແລະ ເປັນລະບົບ

ມາດຕະຖານ 2.1 ການຈັດການລະບົບທີ່ມີປະສິດທິພາບ

ມາດຕະຖານ 2.2 ການເຮັດວຽກເປັນໝູ່ຄະນະ

ມາດຕະຖານ 2.3 ການແກ້ໄຂບັນຫາຂັ້ນຕົ້ນ

**ເປົ້າໝາຍ**

ເພື່ອໃຫ້ເພສັຊກອນມີຄວາມສາມາດໃນການບໍລິຫານວຽກງານ, ສາມາດເຮັດວຽກຮ່ວມກັບຂະແໜງການສາທາລະສຸກອື່ນ ເພື່ອພັດທະນາຄຸນນະພາບຂອງການປະຕິບັດວຽກງານ ແລະ ການໃຫ້ບໍລິການທີ່ມີປະສິດທິພາບ.

**ຈຸດປະສົງດ້ານຄວາມຮູ້**

ເພສັຊກອນຕ້ອງສາມາດ:

1. ອະທິບາຍຫລັກການໃນການບໍລິຫານວຽກງານຢ່າງເປັນລະບົບລວມທັງ ປັດໄຈນາເຂົ້າ ຂະບວນການ ແລະ ຜົນໄດ້ຮັບ
2. ອະທິບາຍແນວຄວາມຄິດຂອງການເຮັດວຽກເປັນໝູ່ຄະນະ
3. ອະທິບາຍຫລັກການການຮັບປະກັນຄຸນນະພາບຂອງວຽກງານເພສັຊກັມ
4. ເຂົ້າໃຈ ແລະ ອະທິບາຍວິທີການແກ້ບັນຫາທີ່ເປັນລະບົບ

**ຈຸດປະສົງດ້ານທັກສະ**

ເພສັຊກອນຕ້ອງສາມາດ:

1. ການົດເປົ້າໝາຍໃນການພັດທະນາຄຸນນະພາບຂອງວຽກງານເພສັຊກັມ
2. ການົດຂະບວນການເພື່ອໃຫ້ບັນລຸເປົ້າໝາຍ ແລະ ສອດຄ່ອງກັບມາດຕະຖານທີ່ກ່ຽວຂ້ອງ
3. ການົດຕົວຊີ້ວັດການປະກັນຄຸນນະພາບຂອງວຽກງານເພສັຊກັມ ແລະ ວິທີການປະເມີນ
4. ການົດເກນມາດຕະຖານ ເປົ້າໝາຍຂອງຕົວຊີ້ວັດທີ່ຕ້ອງການ
5. ອະທິບາຍໄດ້ວ່າຕົວຊີ້ວັດທີ່ຕິດຕາມນັ້ນຢູ່ໃນຫລືນອກເກນມາດຕະຖານທີ່ຍອມຮັບໄດ້
6. ວິເຄາະບັນຫາ ແລະ ວາງແນວທາງການແກ້ໄຂບັນຫາເບື້ອງຕົ້ນ

## ໝວດທີ່ 3: ການສະໜອງຂໍ້ມູນຂ່າວສານ ແລະ ຄວາມຮູ້

ມາດຕະຖານ 3.1 ການບໍລິຫານຈັດການກ່ຽວກັບຂໍ້ມູນຂ່າວສານ
ມາດຕະຖານ 3.2 ການສື່ສານທີ່ມີປະສິດທິພາບ
ມາດຕະຖານ 3.3 ການໃຫ້ຄວາມຮູ້

**ເປົ້າໝາຍ**

ເພື່ອໃຫ້ເພສັຊກອນມີຄວາມສາມາດໃນການຄົ້ນຫາຂໍ້ມູນໄດ້ຢ່າງເໝາະສົມ ມີຄວາມສາມາດໃນການສື່ສານ ແລະ ມີຄວາມສາມາດໃນການເຜີຍແຜ່ ແລະ ໃຫ້ຄວາມຮູ້.

**ຈຸດປະສົງດ້ານຄວາມຮູ້**

ເພສັຊກອນຕ້ອງສາມາດ:

1. ຊອກຄົ້ນຂໍ້ມູນ ແລະ ປະເມີນຄວາມໜ້າເຊື່ອຖືຂອງຂໍ້ມູນຈາກແຫລ່ງຂໍ້ມູນຕ່າງໆເພື່ອຕອບຄາຖາມ ກ່ຽວກັບຢາ
2. ອະທິບາຍຫລັກການ, ວິທີການສື່ສານທີ່ມີປະສິດທິພາບ ທັງດ້ວຍວາຈາ ແລະ ລັກສະນະທ່າທີ
3. ອະທິບາຍປະເພດຂອງສື່ ຈຸດດີ ຈຸດອ່ອນ ທີ່ໃຊ້ໃນການເຜີຍແຜ່ຄວາມຮູ້ ແລະ ແນວທາງການດາເນີນການ ຢ່າງເໝາະສົມ

**ຈຸດປະສົງດ້ານທັກສະ**

ເພສັຊກອນຕ້ອງສາມາດ:

1. ຊອກຄົ້ນຂໍ້ມູນຈາກແຫລ່ງຂໍ້ມູນທີ່ເໝາະສົມ
2. ປະເມີນຄວາມໜ້າເຊື່ອຖືຂອງຂໍ້ມູນຈາກແຫລ່ງຂໍ້ມູນຕ່າງໆ
3. ສື່ສານຢ່າງຄ່ອງແຄ້ວເພື່ອເພີ້ມປະສິດທິພາບໃນການບໍລິການຄົນເຈັບ
4. ສື່ສານກັບຄົນເຈັບໃນຂັ້ນຕອນການສົ່ງມອບຢາທີ່ເໝາະສົມ
5. ບົ່ງບອກວິທີທາງໃນການແກ້ໄຂບັນຫາຕ່າງໆທີ່ເກີດຈາກການສື່ສານ
6. ສື່ສານກັບຄົນເຈັບ ແລະ ຜູ້ຮັບບໍລິການເພື່ອໃຫ້ຂໍ້ມູນຢາ ທັງທາງວາຈາ, ໂທລະສັບ ແລະ ການຂຽນຢ່າງມີ ປະສິດທິພາບ
7. ການົດວິທີການເຜີຍແຜ່ໂດຍຮູບແບບສື່ຕ່າງໆ ໄດ້ຢ່າງເໝາະສົມ

## ໝວດທີ່ 4: ການປະຕິບັດກ່ຽວກັບຜະລິດ ແລະ ຄວບຄຸມຄຸນນະພາບຜະລິດຕະພັນຢາຫລວງ, ຢາພື້ນເມືອງ, ອາຫານເສີມສຸຂະພາບ, ເຄມີເພສັຊ, ອາຫານ ແລະ ເຄື່ອງສຳອາງ

### ມາດຕະຖານ 4.1 ການໝູນໃຊ້ຄວາມຮູ້ດ້ານຮູບແບບຜະລິດຕະພັນຢາເຂົ້າກັບການປະຕິບັດວຽກງານ

**ເປົ້າໝາຍ**

ເພື່ອໃຫ້ເພສັຊກອນສາມາດຈຳແນກ ບົ່ງບອກ ຄັດເລືອກຮູບແບບຜະລິດຕະພັນຢາໃຫ້ສອດຄ່ອງກັບການປະຕິບັດວຽກງານ, ການຜະລິດ, ການຄວບຄຸມຄຸນນະພາບເຄມີທີ່ໃຊ້ເປັນຢາ ແລະ ການຂຶ້ນທະບຽນຢາ

**ຈຸດປະສົງດ້ານຄວາມຮູ້**

ເພສັຊກອນຕ້ອງສາມາດ:

1. ອະທິບາຍລັກສະນະສາຄັນຂອງຜະລິດຕະພັນຢາໃນຮູບແບບຕ່າງໆ ແລະ ປະເພດຂອງຢາ
2. ອະທິບາຍຄວາມສາພັນຂອງຄຸນລັກສະນະທາງເຄມີ ວັດຖຸ ຂອງຕົວຢາໃນຮູບແບບຜະລິດຕະພັນຢາ ແລະ ຂະບວນການຜະລິດຢາ ຕໍ່ປະສິດທິພາບ ແລະ ການອອກລິດຂອງຢາ
3. ອະທິບາຍຫລັກການທີ່ສາຄັນໃນຂະບວນການຜະລິດ ແລະ ການວິເຄາະຄຸນນະພາບຢາ
4. ອະທິບາຍແນວທາງການພັດທະນາຜະລິດຕະພັນຢາຈົນເຖິງການຂຶ້ນທະບຽນ

**ຈຸດປະສົງດ້ານທັກສະ**

ເພສັຊກອນຕ້ອງສາມາດ:

1. ບົ່ງບອກຊະນິດ/ຮູບແບບຂອງຢາຈາກລັກສະນະພາຍນອກ
2. ເລືອກເຄື່ອງຫຸ້ມຫໍ່ໃຫ້ເໝາະສົມກັບຊະນິດ/ຮູບແບບຂອງຢາ
3. ເລືອກຮູບແບບຜະລິດຕະພັນຢາທີ່ເໝາະສົມທີ່ສອດຄ່ອງກັບເງື່ອນໄຂຂອງຄົນເຈັບ
4. ເລືອກເຄື່ອງຫຸ້ມຫໍ່ເພື່ອປ້ອງກັນການເກີດປະຕິກິລິຍາຕໍ່ກັນລະຫວ່າງເຄື່ອງຫຸ້ມຫໍ່ກັບຢາ
5. ຕອບຄາຖາມຫລືໃຫ້ຂໍ້ມູນທີ່ກ່ຽວຂ້ອງກັບໂຄງສ້າງເຄມີຂອງຢາກັບການອອກລິດ ແລະ ພິດຂອງຢາ
6. ກວດສອບຄວາມຖືກຕ້ອງຂອງຊື່ຢາທາງເຄມີໃຫ້ກົງກັບໂຄງສ້າງທາງເຄມີໄດ້
7. ປຸງແຕ່ງຕາມຕາລາຢາພື້ນຖານ ແລະ ຕາລາຢາໃນໂຮງໝໍ

### ມາດຕະຖານ 4.2 ການຄວບຄຸມຄຸນນະພາບຂອງຜະລິດຕະພັນຢາຫລວງ, ອາຫານເສີມສຸຂະພາບ, ເຄມີເພສັຊ, ອາຫານ ແລະ ເຄື່ອງສຳອາງ

**ເປົ້າໝາຍ**

ເພື່ອໃຫ້ເພສັຊກອນມີຄວາມຮູ້ກ່ຽວກັບການຄວບຄຸມຄຸນນະພາບ ວິທີວິໄຈ ການກວດກາຄຸນນະພາບຕາມຕຳລາຢາຫລວງ, ອາຫານເສີມສຸຂະພາບ, ເຄມີເພສັຊ, ອາຫານ, ແລະ ເຄື່ອງສຳອາງ. ມີຄວາມຮູ້ກ່ຽວກັບ ເຄື່ອງມືພື້ນຖານທີ່ໃຊ້ໃນການກວດກາ ຄຸນນະພາບທີ່ສຳຄັນ. ມີຄວາມຮູ້ໃນຕາລາ ຢາຕ່າງໆທີ່ຖືກຮັບຮອງ ແລະ ສາມາດຄົ້ນຫາຂໍ້ມູນທີ່ຈຳເປັນຕ່າງໆໄດ້

**ຈຸດປະສົງດ້ານຄວາມຮູ້**

ເພສັຊກອນຕ້ອງ:

1. ເຂົ້າໃຈຂໍ້ກໍານົດຄຸນນະພາບວັດຖຸດິບ ວັດສະດຸທີ່ໃຊ້ຫຸ້ມຫໍ່ ຢາສໍາເລັດຮູບ ແລະ ການເລືອກຢາ
2. ມີຄວາມຮູ້ໃນການວິໄຈພື້ນຖານທີ່ກໍານົດໃນຕໍາລາຢາ
3. ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບຫລັກການວິທີວິເຄາະພື້ນຖານກັບເຄມີທາງຢາ, ອາຫານເສີມສຸຂະພາບ, ອາຫານ ແລະ ເຄື່ອງສໍາອາງ
4. ມີຄວາມຮູ້ ຄວາມເຂົ້າໃຈຫລັກການປະກັນຄຸນນະພາບຢາ, ອາຫານເສີມສຸຂະພາບ, ອາຫານ ແລະ ເຄື່ອງສໍາອາງ
5. ມີຄວາມຮູ້ ຄວາມເຂົ້າໃຈໃນອົງປະກອບຂອງໃບຢັ້ງຢືນຄຸນນະພາບ
6. ມີຄວາມຮູ້ກ່ຽວກັບຕໍາລາຢາຕ່າງໆທີ່ຖືກຮັບຮອງ
7. ມີຄວາມເຂົ້າໃຈກ່ຽວກັບຂໍ້ມູນ ວິທີການໃນການຊອກຄົ້ນຂໍ້ມູນ ທີ່ຢູ່ໃນຕໍາລາຢາ

**ຈຸດປະສົງດ້ານທັກສະ**

ເພສັຊກອນຕ້ອງສາມາດ:

1. ວິໄຈດ້ວຍວິທີພື້ນຖານທີ່ກໍານົດໃນຕໍາລາຢາ
2. ກວດກາຄຸນນະພາບຢາ, ອາຫານເສີມສຸຂະພາບ, ອາຫານ ແລະ ເຄື່ອງສໍາອາງ
2. ອ່ານ ແລະ ແປຜົນໃບຢັ້ງຢືນຄຸນນະພາບໄດ້ຢ່າງຖືກຕ້ອງ
3. ຊອກຄົ້ນຂໍ້ມູນທີ່ຕ້ອງການຈາກຕໍາລາຢາທີ່ຖືກຮັບຮອງ

**ມາດຕະຖານ 4.3 ຢາພື້ນເມືອງ ແລະ ການຄວບຄຸມຄຸນນະພາບ**

**ເປົ້າໝາຍ**

ເພື່ອໃຫ້ເພສັຊກອນຮູ້ຈັກຫລັກການ ແລະ ຂັ້ນຕອນການຂຶ້ນທະບຽນ ແລະ ການຄວບຄຸມຄຸນນະພາບຢາພື້ນເມືອງ

**ຈຸດປະສົງດ້ານຄວາມຮູ້**

ເພສັຊກອນຕ້ອງສາມາດ:

1. ອະທິບາຍຄວາມແຕກຕ່າງລະຫວ່າງຊັບພະຍາກອນທີ່ເປັນຢາ ແລະ ຢາພື້ນເມືອງ
2. ອະທິບາຍແນວທາງ ຫລັກການ ແລະ ຂັ້ນຕອນການຂຶ້ນທະບຽນຢາພື້ນເມືອງ
3. ແນວທາງການຄວບຄຸມຄຸນນະພາບຢາພື້ນເມືອງ ແລະ ຜະລິດຕະພັນຢາພື້ນເມືອງໃນບັນຊີຢາຈາເປັນພື້ນຖານ

**ຈຸດປະສົງດ້ານທັກສະ**

ເພສັຊກອນຕ້ອງສາມາດ:

ສືບຄົ້ນ ແລະ ໃຫ້ຂໍ້ມູນທີ່ກ່ຽວຂ້ອງກັບການຄວບຄຸມຄຸນນະພາບຜະລິດຕະພັນຢາພື້ນເມືອງ

## ໝວດທີ່ 5: ການຈັດຫາຢາ

ມາດຕະຖານ 5.1 ການສະໜອງຢາເພື່ອການໃຫ້ບໍລິການໄດ້ຢ່າງມີຄຸນນະພາບ

ມາດຕະຖານ 5.2 ການຄວບຄຸມເກັບຮັກສາ ຢາເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພ

**ເປົ້າໝາຍ**

ເພື່ອໃຫ້ເພສັຊກອນສາມາດບົ່ງບອກວິທີການສະໜອງຢາເພື່ອໃຫ້ໄດ້ມາຊຶ່ງຜະລິດຕະພັນຢາທີ່ມີຄຸນນະພາບ ແລະ ເໝາະສົມກັບຄວາມຕ້ອງການ, ສາມາດບົ່ງບອກວິທີການການຄວບຄຸມການເກັບຮັກສາຢາເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພ

**ຈຸດປະສົງດ້ານຄວາມຮູ້**

ເພສັຊກອນຕ້ອງ:

1. ມີຄວາມຮູ້ກ່ຽວກັບການຈັດຊື້ ຈັດຫາ ຕາມປະເພດຂອງຢາ
2. ສາມາດໝູນໃຊ້ຄວາມຮູ້ທາງເຄມີເພສັຊສາດ, ແລະ ເພສັຊກັມໃນການຄັດເລືອກຜະລິດຕະພັນຢາ
3. ສາມາດວາງແຜນ ແລະ ການດຳເນີນການໃຫ້ມີຢາໄວ້ໃນການບໍລິການ ສາຮອງ ຢ່າງເໝາະສົມ
5. ມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບເງື່ອນໄຂການເກັບຮັກສາຢາເພື່ອຮັບປະກັນຄຸນນະພາບຢາແຕ່ລະຊະນິດ
6. ມີຄວາມຮູ້ກ່ຽວກັບວິທີການຄວບຄຸມການເບີກຈ່າຍ ແລະ ການແຈກຢາຍຢາໃນໂຮງໝໍ
7. ສາມາດເລືອກເຄື່ອງຫຸ້ມຫໍ່ໃຫ້ເໝາະສົມກັບຊະນິດ/ຮູບແບບຂອງຢາ

**ຈຸດປະສົງດ້ານທັກສະ**

ເພສັຊກອນຕ້ອງສາມາດ:

1. ບົ່ງບອກວິທີການທີ່ເຮັດໃຫ້ຮູ້ປະລິມານຄວາມຕ້ອງການໃຊ້ ແລະ ການກຳນົດຈັດຫາທີ່ເໝາະສົມ
2. ໃຊ້ຂໍ້ມູນໃນໃບຢັ້ງຢືນຄຸນນະພາບເພື່ອປະກອບການຕັດສິນໃຈໃນການຮັບຢາ
3. ເລືອກຜະລິດຕະພັນຢາທີ່ເໝາະສົມໂດຍໃຊ້ຂໍ້ມູນທາງເຄມີເພສັຊສາດ ແລະ ເພສັຊກັມໄດ້
4. ກຳນົດເງື່ອນໄຂ ແລະ ການເກັບຮັກສາໄດ້
5. ບົ່ງບອກວິທີການເບີກຈ່າຍ ແລະ ການແຈກຢາຍຢາທີ່ເໝາະສົມກັບປະເພດ ແລະ ກຸ່ມຢາ
6. ວາງລະບົບຕິດຕາມອຸນນະພູມ ແລະ/ຫລືຄວາມຊຸ່ມຂອງການສາຮອງຢາໃນແຫລ່ງຕ່າງໆໄດ້ຢ່າງເໝາະສົມ
7. ກຳນົດອາຍຸການໃຊ້ຢາ (beyond-use date) ໄດ້ຢ່າງເໝາະສົມ

## ໝວດທີ່ 6: ການບໍລິບານທາງເພສັຊກັມເບື້ອງຕົ້ນ ແລະ ການໃຊ້ຢາພື້ນເມືອງ

ມາດຕະຖານ 6.1 ການເບິ່ງແຍງຄົນເຈັບ

ມາດຕະຖານ 6.2 ການປະເມີນຄຳສັ່ງໃຊ້ຢາ

ມາດຕະຖານ 6.3 ຂະບວນການຈ່າຍຢາ ແລະ ສົ່ງມອບຢາ

ມາດຕະຖານ 6.4 ການສົ່ງເສີມການໃຊ້ຢາຢ່າງເໝາະສົມ

### ເປົ້າໝາຍ

ເພື່ອໃຫ້ເພສັຊກອນມີຄວາມຮູ້ດ້ານເພສັຊວິທະຍາ ລວມທັງສາມາດເຂົ້າໃຈພຶດຕິກຳຄົນເຈັບ ຫລືຮັບຮູ້ວ່າມີປັດໃຈອື່ນໆທີ່ມີຜົນຕໍ່ພຶດຕິກຳ, ສາມາດທົບທວນ ແລະ ຄັດແຍກຄຳສັ່ງໃຊ້ຢາເບື້ອງຕົ້ນ ແລະ ສາມາດສື່ສານ ສົ່ງມອບຢາພ້ອມທັງຄຳແນະນຳການໃຊ້ຢາເພື່ອສົ່ງເສີມການໃຊ້ຢາຢ່າງເໝາະສົມ ໂດຍຄຳນຶງເຖິງຄົນເຈັບເປັນສຳຄັນ

### ຈຸດປະສົງດ້ານຄວາມຮູ້

ເພສັຊກອນຕ້ອງສາມາດ:

1. ອະທິບາຍຄວາມເຊື່ອດ້ານສຸຂະພາບ ແລະ ປັດໃຈທີ່ມີຜົນຕໍ່ພຶດຕິກາສຸຂະພາບ
2. ອະທິບາຍຂະບວນການ ແລະ ຫລັກການການຊອກຄົ້ນ ການຮວບຮວມ ແລະ ການວິເຄາະຂໍ້ມູນຂອງຜູ້ຮັບບໍລິການ
3. ອະທິບາຍຫລັກການປະເມີນບັນຫາ ແລະ ການຄັດແຍກສຸຂະພາບຂອງຜູ້ຮັບບໍລິການ
4. ອະທິບາຍຄວາມສາຄັນຂອງອົງປະກອບໃບສັ່ງຢາ/ຄາສັ່ງໃຊ້ຢາທີ່ເໝາະສົມ
5. ອະທິບາຍຫລັກການວິເຄາະໃບສັ່ງຢາເພື່ອປ້ອງກັນຄວາມຜິດພາດ
6. ອະທິບາຍ ແລະ ຈາແນກປະເພດຄວາມຜິດພາດທາງຢາໄດ້ ຕະຫລອດຮອດຄວາມພົວພັນຂອງຂະບວນການປະຕິບັດງານທີ່ກ່ຽວຂ້ອງກັບຄວາມຜິດພາດທາງຢາ
7. ອະທິບາຍຫລັກການທົບທວນຄວາມຖືກຕ້ອງ ແລະ ຄວາມເໝາະສົມຂອງຄາສັ່ງໃຊ້ຢາ ໂດຍໃຊ້ຄວາມຮູ້ດ້ານເພສັຊວິທະຍາ ຜະລິດຕະພັນຢາ ຫລັກການໃຊ້ຢາໃນການປິ່ນປົວພະຍາດທີ່ການິດ
8. ອະທິບາຍວິທີການແກ້ໄຂບັນຫາເບື້ອງຕົ້ນ ກໍລະນີພົບຄວາມຜິດພາດກ່ຽວກັບຢາ ຫລື ບັນຫາທີ່ກ່ຽວກັບການໃຊ້ຢາ
9. ອະທິບາຍວິທີການການເລືອກໃຊ້ຢາທີ່ເໝາະສົມສາຫລັບຄົນເຈັບແຕ່ລະຄົນສາຫລັບບັນຫາສຸຂະພາບຂັ້ນຕົ້ນ
10. ອະທິບາຍຫລັກການໃຫ້ຄາແນະນາຫລືສົ່ງຕໍ່ຜູ້ຮັບບໍລິການໄປຫາສະຖານທີ່ບໍລິການສາທາລະນະສຸກລະດັບອື່ນໄດ້ຢ່າຖືກຕ້ອງເໝາະສົມກັບສະຖານະການ

### ຈຸດປະສົງດ້ານທັກສະ

ເພສັຊກອນຕ້ອງສາມາດ:

1. ສື່ສານໃນລັກສະນະສາພາດເພື່ອຫາຂໍ້ມູນສາຫລັບວິເຄາະອາການ ແລະ ຄົ້ນຫາບັນຫາທາງສຸຂະພາບຂອງຄົນເຈັບໄດ້ຢ່າງມີເປົ້າໝາຍ ແລະ ເໝາະສົມ
2. ບົ່ງບອກຄວາມຜິດພາດທີ່ເກີດຈາກຢາໄດ້
3. ໃຊ້ຫລັກການ ແລະ ວິທີການຈາແນກບັນຫາກ່ຽວກັບການໃຊ້ຢາມາປະເມີນຄວາມຖືກຕ້ອງຂອງໃບສັ່ງຢາເບື້ອງຕົ້ນໄດ້

4. ຈັດ/ກຽມ ແລະ ສົ່ງມອບຢາໄດ້ຢ່າງເໝາະສົມ
5. ເລືອກໃຊ້ຢາ ແລະ ໃຫ້ຄໍາແນະນໍາການເບິ່ງແຍງສຸຂະພາບ ການໃຊ້ຢາ ລວມທັງການປະຕິບັດຕົນ ແລະ ໃຫ້ຄໍາແນະນໍາສໍາຫລັບການຕິດຕາມຜົນທາງຫ້ອງທົດລອງທີ່ສໍາຄັນໃຫ້ແກ່ຜູ້ຮັບບໍລິການໄດ້ຢ່າງຖືກຕ້ອງ ແລະ ເໝາະສົມກັບຄົນເຈັບແຕ່ລະຄົນ

### ມາດຕະຖານ 6.5 ການຈັດການອາການບໍ່ເພິ່ງປາດຖະໜາຈາກການໃຊ້ຢາ

**ເປົ້າໝາຍ**

ເພື່ອໃຫ້ເພສັດຊະກອນສາມາດບົ່ງບອກປະເພດຂອງອາການບໍ່ເພິ່ງປາດຖະໜາທີ່ເກີດຈາກການໃຊ້ຢາ ແລະ ສາມາດແນະນໍາການປະຕິບັດຕົນເບື້ອງຕົ້ນຢ່າງເໝາະສົມເມື່ອເກີດອາການຂຶ້ນ

**ຈຸດປະສົງດ້ານຄວາມຮູ້**

ເພສັດຊະກອນຕ້ອງສາມາດ:

1. ອະທິບາຍ ແລະ ບົ່ງບອກປະເພດຂອງອາການບໍ່ເພິ່ງປາດຖະໜາຈາກການໃຊ້ຢາ
2. ອະທິບາຍວິທີການແກ້ໄຂເບື້ອງຕົ້ນ ແລະ ການສົ່ງຕໍ່

**ຈຸດປະສົງດ້ານທັກສະ**

ເພສັດຊະກອນຕ້ອງສາມາດ:

1. ສໍາພາດຜູ້ຮັບບໍລິການ ຄົນເຈັບ ເພື່ອຊອກຫາປະຫວັດການໃຊ້ຢາ ອາຫານ ຫລື ຜະລິດຕະພັນສຸຂະພາບ
2. ປະເມີນຄວາມເປັນໄປໄດ້ຂອງອາການບໍ່ເພິ່ງປາດຖະໜາທີ່ເກີດຈາກການໃຊ້ຢາ
3. ໃຫ້ຄໍາແນະນໍາເບື້ອງຕົ້ນ ແລະ ການສົ່ງຕໍ່ເພື່ອຮັບການປິ່ນປົວຢ່າງເໝາະສົມຕໍ່ໄປ

### ມາດຕະຖານ 6.6 ການໃຊ້ຕົ້ນໄມ້ເປັນຢາ ແລະ ຢາພື້ນເມືອງ

**ເປົ້າໝາຍ**

ເພື່ອໃຫ້ເພສັດຊະກອນສາມາດຮູ້ຈັກ ຈໍາແນກ ແລະ ເລືອກໃຊ້ຢາພື້ນເມືອງ, ຕົ້ນໄມ້ທີ່ເປັນຢາ ທີ່ຈໍາເປັນໃນການຮັກສາສຸຂະພາບຂັ້ນຕົ້ນ

**ຈຸດປະສົງດ້ານຄວາມຮູ້**

ເພສັດຊະກອນຕ້ອງສາມາດ:

1. ອະທິບາຍຄຸນປະໂຫຍດ ການໝູນໃຊ້ຕົ້ນໄມ້ທີ່ເປັນຢາ, ຢາພື້ນເມືອງ ທີ່ມີການໃຊ້ໃນບັນຊີຢາພື້ນຖານ ແລະ ນໍາໃຊ້ໃນສາທາລະນະສຸກພື້ນຖານ ເພື່ອການຮັກສາສຸຂະພາບຂັ້ນຕົ້ນ
2. ບົ່ງບອກພາກສ່ວນທີ່ໃຊ້ ແລະ ວິທີການໃຊ້ຕົ້ນໄມ້ເປັນຢາ ແລະ ຢາພື້ນເມືອງ ທີ່ມີການໃຊ້ໃນບັນຊີຢາພື້ນຖານ ແລະ ນໍາໃຊ້ໃນສາທາລະນະສຸກພື້ນຖານ
3. ອະທິບາຍເຖິງຫລັກການດ້ານການສົ່ງເສີມການໃຊ້ຢາພື້ນເມືອງເພື່ອເພິ່ງຕົນເອງ

**ຈຸດປະສົງດ້ານທັກສະ**

ເພສັດຊະກອນຕ້ອງສາມາດ:

1. ບອກຊື່ ແລະ ພາກສ່ວນທີ່ອອກລິດໃນການປິ່ນປົວຂອງຕົ້ນໄມ້ເປັນຢາຕາມທີ່ກຳນົດໄວ້ໃນບັນຊີຢາພື້ນຖານ
2. ຕອບຄຳຖາມຫລືໃຫ້ຂໍ້ມູນທີ່ກ່ຽວຂ້ອງກັບສານສຳຄັນທີ່ມີໃນຕົ້ນໄມ້ເປັນຢາ ແລະ/ຫລື ສານຖອດຣິດ ແລະ ຢາພື້ນເມືອງ ທີ່ມີການໃຊ້ໃນບັນຊີຢາພື້ນຖານ ແລະ ລິດທາງເພສັຊວິທະຍາທີ່ກ່ຽວຂ້ອງໄດ້
3. ບອກຊະນິດ ແລະ ຄຸນປະໂຫຍດ ຂໍ້ຄວນລະວັງ ຂໍ້ຫ້າມໃຊ້ ຂອງ ຕົ້ນໄມ້ເປັນຢາ ແລະ ຢາພື້ນເມືອງທີ່ມີການໃຊ້ໃນບັນຊີຢາພື້ນຖານ ແລະ ນຳໃຊ້ໃນສາທາລະນະສຸກພື້ນຖານ

## ໝວດທີ່ 7: ລະບົບສາທາລະນະສຸກ ແລະ ລະບົບສຸຂະພາບ

ມາດຕະຖານ 7.1: ລະບົບສາທາລະນະສຸກ

ມາດຕະຖານ 7.2: ລະບົບຢາ

ມາດຕະຖານ 7.3: ລະບົບການຄຸ້ມຄອງຜູ້ບໍລິໂພກດ້ານຢາ, ອາຫານ, ເຄື່ອງສຳອາງ ແລະ ສຸຂະພາບ

### ເປົ້າໝາຍ

ເພື່ອໃຫ້ເພສັຊກອນສາມາດເຂົ້າໃຈລະບົບສຸຂະພາບ ຊຶ່ງລວມມີ ລະບົບສາທາລະນະສຸກ ຫລັກການດ້ານສາທາລະນະສຸກ ໜ່ວຍງານທີ່ກ່ຽວຂ້ອງ ລະບົບຢາ ໂຄງປະກອບສ້າງ ຄວາມເຊື່ອມໂຍງ ແລະ ລະບົບຄຸ້ມຄອງຜູ້ບໍລິໂພກດ້ານຢາ ແລະ ສຸຂະພາບ

### ຈຸດປະສົງດ້ານຄວາມຮູ້

ເພສັຊກອນຕ້ອງສາມາດ:

1. ອະທິບາຍ ແລະ ເຂົ້າໃຈລະບົບສາທາລະນະສຸກຂອງ ສປປ ລາວ ຫລັກການກ່ຽວກັບວຽກງານສາທາລະນະສຸກ ການວາງແຜນແກ້ໄຂບັນຫາສາທາລະນະສຸກ
2. ອະທິບາຍ ແລະ ເຂົ້າໃຈໂຄງປະກອບສ້າງ ຄວາມເຊື່ອມໂຍງຂອງລະບົບຢາຂອງປະເທດ
3. ອະທິບາຍ ແລະ ເຂົ້າໃຈວຽກງານນະໂຍບາຍແຫ່ງຊາດດ້ານຢາ ແລະ ການພັດທະນາລະບົບຢາຂອງລາວ
4. ອະທິບາຍ ແລະ ເຂົ້າໃຈໂຄງປະກອບສ້າງລະບົບຢາໃນໂຮງໝໍ ປັດໄຈທີ່ມີຜົນກະທົບ ແລະ ວິທີການຈັດການ
5. ອະທິບາຍຫລັກການດ້ານການຄຸ້ມຄອງຜູ້ບໍລິໂພກ ແລະ ລະບົບຄຸ້ມຄອງຜູ້ບໍລິໂພກດ້ານຢາ, ອາຫານ, ເຄື່ອງສຳອາງ ແລະ ສຸຂະພາບ

### ຈຸດປະສົງດ້ານທັກສະ

ເພສັຊກອນຕ້ອງສາມາດ:

1. ຫາຂໍ້ມູນບັນຫາສຸຂະພາບໄດ້ຢ່າງມີເປົ້າໝາຍ ແລະ ເໝາະສົມ
2. ວິເຄາະບັນຫາສາທາລະນະສຸກ ຊຶ່ງຈະນຳໄປສູ່ການວາງແຜນຕາມຄວາມສຳຄັນ
3. ວິເຄາະບັນຫາລະບົບຢາໃນໂຮງໝໍ ແລະ ວາງແຜນແກ້ໄຂ
4. ບົ່ງບອກຄວາມສ່ຽງ ແລະ ລະບາດວິທະຍາຂອງບັນຫາຢາໃນຊຸມຊົນ
5. ໃຫ້ຄຳແນະນຳຫລືການພິຈາລະນາສາຫລັບຢາ ແລະ ຜະລິດຕະພັນສຸຂະພາບທີ່ບໍ່ເໝາະສົມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*****************

3126

ກະຊວງສາທາລະນະສຸກ

ມະຫາວິທະຍາໄລວິທະຍາສາດສຸຂະພາບ

ເລກທີ /ມວສ

ນະຄອນຫລວງວຽງຈັນ,ວັນທີ 23 JUN 2016

# ຂໍ້ຕົກລົງອະທິການບໍດີວ່າດ້ວຍການແຕ່ງຕັ້ງຄະນະກຳມະການ ຮັບຜິດຊອບໃນການສ້າງມາດຕະຖານຂີດຄວາມສາມາດດ້ານເພສັຊສາດ

- ອີງຕາມ: ຂໍ້ຕົກລົງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍການອະນຸມັດໃຫ້ກົມການສຶກສາ ແລະ ຄົ້ນຄວ້າວິທະຍາ ແລະ ມະຫາວິທະຍາໄລວິທະຍາສາດສຸຂະພາບ ສ້າງມາດຕະຖານຂີດຄວາມສາມາດດ້ານເພສັຊສາດ ເລກທີ 2568/ສທ ລົງວັນທີ 24/9/2015
- ອີງຕາມ: ໃບສະເໜີຂອງຄະນະເພສັຊສາດ ສະບັບເລກທີ 04744/ຄພຊ ລົງວັນທີ 13/6/2016

## ອະທິການບໍດີ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບຕົກລົງ

**ມາດຕາ 1:** ແຕ່ງຕັ້ງຄະນະກຳມະການຮັບຜິດຊອບໃນການສ້າງມາດຕະຖານຂີດຄວາມສາມາດດ້ານເພສັຊສາດ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

**I. ຄະນະຊີ້ນຳລວມ**

| | |
|---|---|
| 1. ທ່ານ ຣສ. ດຣ. ສົມຈິດ ບຸບຜາ | ອະທິການບໍດີ ມວສ |
| 2. ທ່ານ ດຣ. ພູທອນ ວັງກອນວິໄລ | ຮອງອະທິການບໍດີ ມວສ |
| 3. ທ່ານ ຣສ. ດຣ. ສີລີ ແກ່ນພະຈັນ | ຄະນະບໍດີຄະນະເພສັຊສາດ |

**II. ຄະນະຮັບຜິດຊອບດ້ານວິຊາການ**

| | |
|---|---|
| 1. ທ່ານ ດຣ. ນ. ຈັນຖະໜອມ ມະນີທິບ | ຮອງຄະນະບໍດີຄະນະເພສັຊສາດ |
| 2. ອາຈານ ນ. ສຸມັນທາ ສຸວັນລາສີ | ຮອງຄະນະບໍດີຄະນະເພສັຊສາດ |
| 3. ທ່ານ ຣສ. ດຣ. ອຸທິບ ສູນທະວົງ | ຫົວໜ້າຫ້ອງການ ມວສ |
| 4. ທ່ານ ດຣ. ຄຳປະສົງ ເສດຖາວັນໄຊ | ຮອງຫົວໜ້າ ຫ້ອງການມວສ |
| 5. ທ່ານ ດຣ. ນ. ລຳພອນ ສີຫາຄັງ | ຮອງຫົວໜ້າກົມອາຫານ ແລະ ຢາ |
| 6. ທ່ານ ຣສ. ດຣ. ກອງມະນີ ສີດາລາ | ຫົວໜ້າສະຖາບັນການແພດ ແລະ ການຢາພື້ນເມືອງ |
| 7. ທ່ານ ດຣ. ໂກສິນ ສໍສຸລິທັນ | ຮອງຫົວໜ້າສະຖາບັນການແພດແລະການຢາພື້ນເມືອງ |
| 8. ທ່ານ ດຣ. ຖະໜອມ ອິນສານ | ຫົວໜ້າສູນສະໜອງຢາ ແລະ ອຸປະກອນການແພດ |
| 9. ທ່ານ ດຣ. ກິດສະດາ ແສນເທບ | ຮອງຫົວໜ້າສູນສະໜອງຢາ ແລະ ອຸປະກອນການແພດ |
| 10. ທ່ານ ດຣ. ນ. ມະນີວອນ ສີສະແຫວງສຸກ | ຮອງຜູ້ອຳນວຍການໂຮງງານຜະລິດຢາເລກ 3 |
| 11. ທ່ານ ດຣ. ສຸລີສັກ ສູນວໍລະວົງ | ຮອງຫົວໜ້າກອງກວດກາອາຫານ ແລະ ຢາ |
| 12. ທ່ານ ດຣ. ວໍລະຈິດ ທິບພະກຸນ | ຄະນະອຳນວຍການໂຮງໝໍເຊດຖາທິຣາດ |
| 13. ທ່ານ ດຣ. ສົມຈິນ ສິງຫາຣາຊ | ຫົວໜ້າຂະແໜງອາຫານ ແລະ ຢາ ນະຄອນຫລວງ |
| 14. ທ່ານ ຄຳພູ ຈັນທະປານີ | ວິຊາການຂະແໜງອາຫານແລະຢາ ນະຄອນຫລວງ |

| | |
|---|---|
| 15. ທ່ານ ດຣ. ບຸນຄົງ ສີສຸນທອນ | ຫົວໜ້າພະແນກການຢາໂຮງໝໍມະໂຫສົດ |
| 16. ທ່ານ ດຣ. ຄຳຜາຍ ພູມະນີວົງ | ຫົວໜ້າຂະແໜງຮັບປະກັນຄຸນນະພາບສູນວິໄຈອາຫານແລະຢາ |
| 17. ທ່ານ ອານົງຈິດ ທາດາວເຮືອງ | ວິຊາການພະແນກການຢາໂຮງໝໍມິດຕະພາບ |
| 18. ທ່ານ ດຣ. ແສງດາລາ ກິດຕິຍະສັກ | ຫົວໜ້າພະແນກຈັດຕັ້ງບໍລິຫານ ໂຮງງານຜະລິດຢາເລກ 2 |
| 19. ທ່ານ ດຣ. ທອງສະຫວັນ ແສງກົງດາລາ | ຮອງຫົວໜ້າພະແນກຄຸ້ມຄອງການແພດພື້ນເມືອງ, ກົມປິ່ນປົວ |
| 20. ທ່ານ ດຣ. ພຸດທະກອນ ເມືອງວົງ | ວິຊາການກົມການສຶກສາແລະຄົ້ນຄວ້າວິທະຍາສາດ |
| 21. ອາຈານ ນ. ວຽງແກ້ວສຸລິຍະສັກ | ຫົວໜ້າພະແນກວິຊາການ ຄພຊ |
| 22. ອາຈານ ນ. ວິໄລລັກ ພູປະເສີດ | ຫົວໜ້າພະແນກບໍລິຫານ ຄພຊ |
| 23. ອາຈານ ຄຳຫຼ້າ ພົມໄຊຍະລິນຄຳ | ຫົວໜ້າພາກວິຊາວິທະຍາສາດພສັຊກັມ |
| 24. ອາຈານ ນ. ແສງຈັນມະນີ ນິຣັດໃສ | ຮອງຫົວໜ້າພາກວິຊາວິທະຍາສາດເພສັຊກັມ |
| 25. ອາຈານ ນ. ແກ້ວ ສີທາເທບ | ຮອງຫົວໜ້າພາກວິຊາວິທະຍາສາດເພສັຊກັມ |
| 26. ອາຈານ ນ. ຄຳຫຼ້າ ຫຼວງໂຄດ | ຮອງຫົວໜ້າພາກວິຊາບໍລິບານເພສັຊກັມ |
| 27. ອາຈານ ນ. ສົມມະລີ ພົມຕາວົງ | ຮອງຫົວໜ້າພາກວິຊາບໍລິບານເພສັຊກັມ |

III. ອະນຸກຳມະການ

1. ອາຈານ ນ. ຈົ້ວປົວຟອງ ຜາແກ້ວວິໄລ
2. ອາຈານ ນ. ພຸດສະຖາພອນ ສີບຸນເຮືອງ
3. ອາຈານ ນ. ນິພົນ ມົງຄົນມາດ

**ມາດຕາ 2:** ໃຫ້ທຸກພາກສ່ວນທີ່ມີລາຍຊື່ຖືກແຕ່ງຕັ້ງຂ້າງເທິງນັ້ນ ຈົ່ງໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດຕາມໜ້າທີ່ຂອງໃຜລາວ

**ມາດຕາ 3:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ອະທິການບໍດີ ມວສ**

ມະຫາວິທະຍາໄລວິທະຍາສາດສຸຂະພາບ

**ຮສ. ດຣ. ສົມຈິດ ບຸບຜາ**